ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 26 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 28 ມິຖຸນາ 2016

ສຳນັກງານ ຄຄຊ
ຮັບ ເລກທີ 0623
ວັນທີ 29 JUN 2016
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 13/06/2016 ຫາ 17/06/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນໜຸ້ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ພາຍຫຼັງຕົວເລກທາງດ້ານເສດຖະກິດຂອງສະຫະລັດອາເມລິກາອອກມາດີ ເປັນຕົ້ນແມ່ນຕົວເລກການຂໍອະນຸຍາດປຸກສ້າງອາຄານໃໝ່ໃນເດືອນ 5/2016 ເພີ່ມຂຶ້ນ ເປັນ 1.138.000 ຫຼັງ ຈາກ 1.130.000 ຫຼັງ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 10/06/2016 | ອາທິດນີ້ 17/06/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1296 | 1,1251 | 0,40% |
| ໂດລາ/ເຢນ | 106,99 | 104,39 | 2,49% |
| ໂດລາ/ບາດ | 35,24 | 35,27 | -0,06% |
| ໂດລາ/ເປໂຊ | 46,09 | 46,42 | -0,71% |
| ໂດລາ/ຣູເປີຍ | 13.296,67 | 13.350,89 | -0,41% |
| ໂດລາ/ໂດລາສິງກະໂປ | 1,3546 | 1,3493 | 0,40% |
| ໂດລາ/ຢວນ | 6,5590 | 6,5879 | -0,44% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 6,57% ຈາກ 52,08 ໂດລາ/ບາເຣວ ມາເປັນ 48,66 ໂດລາ/ບາເຣວ ພາຍຫຼັງບໍລິສັດຂຸດເຈາະນ້ຳມັນ ເບເກີ້ ລາຍງານຈຳນວນຫຼຸມຂຸດເຈາະນ້ຳມັນດິບໃນສະຫະລັດ ສິ້ນສຸດວັນທີ 17 ມິຖຸນາ 2016 ເພີ່ມຂຶ້ນ

ເປັນ 337 ຫຼຸມ ຊຶ່ງເພີ່ມຂຶ້ນເປັນໄລຍະ 3 ທິດຕິດຕໍ່ກັນ. ສຳລັບລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 1,31% ຈາກ 1.266,24 ເປັນ 1.282,86 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,01% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,04% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,18% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,53% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,60% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,89% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,70% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,92% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 10/06/2016 | | | ອາທິດນີ້ 17/06/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| . | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.101,06 | 8.127,00 | 8.104,83 | 8.099,58 | 8.125,69 | 8.104,23 | 0,02% | 0,02% | 0,01% |
| ບາດ | 231,08 | 232,75 | 232,66 | 230,65 | 232,34 | 232,26 | 0,19% | 0,18% | 0,18% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.118,17 | 8.145,12 | 8.131,64 | 8.113,42 | 8.143,73 | 8.128,58 | 0,06% | 0,02% | 0,04% |
| ບາດ | 231,71 | 232,78 | 232,25 | 230,25 | 231,80 | 231,03 | 0,63% | 0,42% | 0,53% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,21% | 0,22% | 0,33% | 0,17% | 0,22% | 0,30% | | | |
| ບາດ | 0,27% | 0,01% | -0,18% | -0,17% | -0,23% | -0,53% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 1,94% ທຽບໃສ່ວັນທີ 10/06/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,94%;
- ປະລິມານເງິນ M2 ຫຼຸດລົງ 0,53% ເມື່ອທຽບໃສ່ວັນທີ 10/05/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,73%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 13-17/06/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 97,13 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 133,69 ລ້ານໂດລາ ແລະ ຂາຍໂດລາໄດ້ 36,56 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 3.859,42 ລ້ານບາດ (ໃນນີ້ ຊື້ບາດໄດ້ 350,57 ລ້ານບາດ ແລະ ຂາຍບາດໄດ້ 4.209,99 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 37,41% ແລະ ເພີ່ມຂຶ້ນ 52,03% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 3,45 ລ້ານໂດລາ ແລະ ເງິນບາດມີຈຳນວນ 56 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 16,80 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 18 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 49,82 ລ້ານໂດລາ ແລະ ຊື້ເງິນບາດໄດ້ສຸດທິ ຈຳນວນ 3.169,60 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 06-10/06/2016 | | ອາທິດທີ 13-17/06/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **91,47** | **397,31** | **133,69** | **350,57** | **46,16%** | **-11,77%** |
| - ທ/ຄທຸລະກິດລັດ | 14,91 | 216,31 | 16,16 | 127,27 | 8,32% | -41,16% |
| - ທ/ຄທຸລະກິດອື່ນໆ | 76,55 | 181,00 | 117,53 | 223,30 | 53,53% | 23,37% |
| 2. ການຂາຍເງິນຕາຕ່າງປະເທດ | **32,43** | **2.602,54** | **36,56** | **4.209,99** | **12,73%** | **61,76%** |
| - ທ/ຄທຸລະກິດລັດ | 19,83 | 223,66 | 18,04 | 143,66 | -9,02% | -35,77% |
| - ທ/ຄທຸລະກິດອື່ນໆ | 12,60 | 2.378,88 | 18,52 | 4.066,32 | 46,95% | 70,93% |
| ຊື້-ຂາຍສຸດທິ ທທກ | **59,04** | **-2.205,23** | **97,13** | **-3.859,42** | **64,52%** | **75,01%** |
| ຜົດດ່ຽງ ຊື້-ຂາຍ | 64,55% | -555,04% | 72,65% | -1.100,91% | | |
| ມູນຄ່າການຊື້-ຂາຍ | **123,90** | **2.999,85** | **170,24** | **4.560,55** | **37,41%** | **52,03%** |
| 3. ການຊື້ຂາຍລະຫວ່າງທຫລ ກັບ ທທກ | **-6,41** | **-38,00** | **-16,80** | **-18,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 6,41 | 38,00 | 16,80 | 18,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,10** | **27,00** | **3,45** | **56,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **-110,29** | **3.874,14** | **-49,82** | **3.169,60** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,12 | 3.874,14 | 20,50 | 3.169,60 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 110,41 | 0,00 | 70,32 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 05/2016 ຢູ່ໃນລະດັບ 1,17% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,21% ຈາກ 0,96% ໃນເດືອນ 04/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 173,79 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 12,4% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 936 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 25,46% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 472,30 ຕື້ກີບ ເພີ່ມຂຶ້ນ 69,83% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (10-16/06/2016) ຈໍານວນ 1.682 ຄັ້ງ ໂດຍມີມູນຄ່າ 390,17 ຕື້ກີບ ເພີ່ມຂຶ້ນ 7,43% ຊຶ່ງທະນາຄານການພັດທະນາລາວ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 435 ຄັ້ງ.

2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.130,16 ຈຸດ ເພີ່ມຂຶ້ນ 0,73% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 37.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 207,02 ລ້ານກີບ ຫຼຸດລົງ 58,42% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 58,88% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.000 ກີບ/ຮຸ້ນ ຫຼຸດລົງ 22 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 6 ລ້ານກີບ ຫຼຸດລົງ 90,29% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 21,67% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,30%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.605 ກີບ/ຮຸ້ນ ຫຼຸດລົງ 32 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 35.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 199,52 ລ້ານກີບ ຫຼຸດລົງ 52,67% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 60,95% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 7.000 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາ ທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ການຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາປິດ 2.800 ກີບ/ຮຸ້ນ ເພີ່ມຂຶ້ນ 196 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ການຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,50 ລ້ານກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສໍາເລັດການຕ້ອນຮັບ ທ່ານ Takeski Hikihar, ເອກອັກຄະລັດຖະທູດຍີ່ປຸ່ນ, ປະຈໍາ ສປປ ລາວ ທີ່ໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ;
- ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດການໃຫ້ສໍາພາດຕໍ່ວາລະສານ FOREIGN AFFAIRS ພາຍໃຕ້ຫົວຂໍ້: "Laos: Economic Growth and Integration" ຂອງສະຖາບັນ World Profile Group;
- ສໍາເລັດພິທີມອບຮັບໜ້າທີ່ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່ຂອງຫ້ອງການ ແລະ ກົມຈັດຕັ້ງແລະພະນັກງານ. ພ້ອມນີ້ກໍ່ມີພິທີປະກາດການຈັດຕັ້ງຂັ້ນກົມ ແລະ ຂັ້ນພະແນກຈໍານວນໜຶ່ງພາຍໃນ ທຫລ;

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສໍາເລັດການຈັດກອງປະຊຸມ: ❶ສໍາມະນາເຜີຍແຜ່ວຽກງານຫຼັກຊັບ ໃນຫົວຂໍ້ "ການລົງທຶນຢ່າງມືອາຊີບກັບຮຸ້ນ" ຢູ່ວິທະຍາໄລເຕັກນິກ-ວິຊາຊີບ ມິດຕະພາບວຽງຈັນ-ຣ່າໂມ້ຍ, ❷ກອງປະຊຸມປັບປຸງຮ່າງດໍາລັດວ່າດ້ວຍການປົກປ້ອງຜູ້ຝາກເງິນ ຈັດໂດຍກອງທຶນປົກປ້ອງຜູ້ຝາກເງິນ, ❸ກອງປະຊຸມສໍາມະນາວິຊາສະເພາະ ໃນຫົວຂໍ້: ຄວາມຮູ້ພື້ນຖານກ່ຽວກັບວິທີການສັງເກດທະນາບັດ ແທ້-ປອມ ສະກຸນເງິນຕາຕ່າງປະເທດ" ທີ່ ທຫລ, ❹ກອງປະຊຸມຄົ້ນຄວ້າປຶກສາຫາລືກັບພາກສ່ວນກ່ຽວຂ້ອງກ່ຽວກັບ ການດໍາເນີນຄະດີຟອກເງິນ ແລະ ການຈັດຕັ້ງຄໍາສັ່ງວ່າດ້ວຍ ການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ສະບັບເລກທີ 03/ນຍ ແລະ ຄໍາແນະນໍາວ່າດ້ວຍ ການນໍາໃຊ້ມາດຕະການຊົ່ວຄາວຕໍ່ຊັບສິນທີ່ພົວພັນກັບການຟອກເງິນ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລະບັບເລກທີ 08/ຄຕຟງ ທີ່ ທຫລ, ❺ຝຶກອົບຮົມ ໃນຫົວຂໍ້ "ການວິເຄາະລາຍງານທາງການເງິນ" ທີ່ ສທຄ;
- ສໍາເລັດການເຂົ້າຮ່ວມ: ❶ກອງປະຊຸມ ໃນຫົວຂໍ້ "Operation and Technology Risk Management Supervision" ທີ່ປະເທດມາເລເຊຍ, ❷ຝຶກອົບຮົມ ສໍາລັບຄູຝຶກຫຼັກສູດ: "ການວາງແຜນທຸລະກິດ ແລະ ການຕະຫຼາດ ໄດ້ແກ່ຜູ້ປະກອບການທຸລະກິດຄອບຄົວ ທີ່ສະມາຄົມການເງິນຈຸລະພາກ;
- ສໍາເລັດການອອກແຈ້ງການເຕືອນ ທະນາຄານທີ່ຍັງບໍ່ສໍາເລັດການຈັດພິມເຜີຍແຜ່ຖານະການເງິນ ປະຈໍາປີ 2015 ໃນຮູບແບບປຶ້ມລາຍງານຖານະການເງິນ ແລະ ແຜນພັບ;
- ສໍາເລັດການສະໜັບສະໜູນໃຫ້ຄະນະຮັບຜິດຊອບຮ່າງລະບຽບການບໍລິການທາງການເງິນຜ່ານລະບົບເອເລັກໂທນິກ ໄປສໍາມະນາຢູ່ ປະເທດໄທ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກໍານົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❸ຄົ້ນຄວ້າບົດແນະນໍາມາດຕະຖານສາກົນດ້ານການບັນຊີ IAS18 ແລະ ລາຍຮັບ IAS36 ການເສື່ອມມູນຄ່າຂອງຊັບສິນ ແລະ IFRS10 ເອກະສານລາຍງານທາງການເງິນແບບລວມກິດຈະການ, ❹ສ້າງລະບຽບວ່າດ້ວຍສູນຊໍາລະສະສາງ, ❺ຄົ້ນຄວ້າເງື່ອນໄຂໃນການຮ່າງລະບຽບວ່າດ້ວຍການຄຸ້ມຄອງກອງທຶນບ້ານ;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ສະພາບໍລິຫານຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ, ສິດ ແລະ ໜ້າທີ່ຂອງຜູ້ກໍານົດລະຫັດຫຼັກຊັບແຫ່ງຊາດ ແລະ ການຊື້-ຂາຍຫຼັກຊັບ ທີ່ບໍ່ວາງເງິນມັດຈໍາລວງໜ້າ (Non Pre-Funded);
- ສືບຕໍ່ສ້າງປຶ້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ
ບ້ວງການ

ເພັດສະຖາພອນ ແກ້ວວົງວິຈິດ